# ສະບາຍດີປີໃຫມ່

## ປີວອກ ພ.ສ ໒໕໕໙

## HAPPY NEW YEAR

## 2016



**ມັງກອນ-ກຸມພາ**

ການຄຸ້ມຄອງນຳໃຊ້ທີ່ດິນແບບມີສ່ວນຮ່ວມ



**ມີນາ-ເມສາ**

ບົດບາດຂອງແມ່ຍິງໃນສັງຄົມປັດຈຸບັນ



**ພຶດສະພາ-ມິຖຸນາ**

ການນຳໃຊ້ແຮງງານ



**ກໍລະກົດ-ສິງຫາ**

ການມີສ່ວນຮ່ວມໃນການປົກປັກຮັກສາສິ່ງແວດລ້ອມ



**ກັນຍາ-ຕຸລາ**

ຄວາມສຳຄັນຂອງສັນຍາ



**ພະຈິກ-ທັນວາ**

ຂັ້ນຕອນການເຂົ້າເຖິງຂະບວນຍຸຕິທຳ

ຮ່ວມຜະລິດໂດຍ

LIWG LAND ISSUES WORKING GROUP

Village Focus International · care · CIDSE Développement et la Solidarité · PADETC · WWF · SODA

# ການຄຸ້ມຄອງນຳໃຊ້ທີ່ດິນແບບມີສ່ວນຮ່ວມ




**ມາດຕາ 14: ການຫັນປ່ຽນປະເພດທີ່ດິນ**

ການຫັນປ່ຽນທີ່ດິນປະເພດໜຶ່ງ ໄປສູ່ທີ່ດິນອີກປະເພດໜຶ່ງ ຈະດຳເນີນໄດ້ກໍຕໍ່ເມື່ອ ຫາກເຫັນວ່າ ມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໃຫ້ມີຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ ແລະ ຕ້ອງໄດ້ຮັບອະນຸມັດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງເສຍກ່ອນ.

**ມາດຕາ 17 (ໃໝ່): ການກຳນົດຂອບເຂດ ສິດນຳໃຊ້ທີ່ດິນກະສິກຳ**

ລັດອະນຸຍາດໃຫ້ ບຸກຄົນ ແລະ ຄອບຄົວ ນຳໃຊ້ທີ່ດິນກະສິກຳ ຢ່າງຖືກຕ້ອງຕາມແຜນຈັດສັນ, ຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນ ຕາມຈຳນວນເນື້ອທີ່ ດັ່ງນີ້:

- ຜູ້ທີ່ປູກເຂົ້າ, ລ້ຽງສັດ ໃນຈຳນວນສູງສຸດ ບໍ່ເກີນໜຶ່ງເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ;
- ຜູ້ທີ່ເຮັດສວນປູກພືດອຸດສາຫະກຳ ແລະ ພືດລົ້ມລຸກ ໃນຈຳນວນສູງສຸດ ບໍ່ເກີນສາມເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ;
- ຜູ້ທີ່ເຮັດສວນປູກຕົ້ນໄມ້ໃຫ້ໝາກ ໃນຈຳນວນສູງສຸດ ບໍ່ເກີນສາມເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ;
- ຜູ້ທີ່ນຳໃຊ້ທີ່ດິນປອກໄລ່ນ ຫຼື ປ່າຫຍ້າປະເພດຕ່າງໆ ຊຶ່ງຫັນມາປູກພືດພັນຫຍ້າລ້ຽງສັດ ໃນຈຳນວນສູງສຸດ ບໍ່ເກີນສິບຫ້າເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ.

**ມາດຕາ 67 (ໃໝ່): ພັນທະຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ໃນການເຊົ່າ ຫຼື ສຳປະທານທີ່ດິນ**

1. ໃຊ້ທີ່ດິນໂດຍຖືກຕ້ອງຕາມເປົ້າໝາຍ;
2. ບໍ່ສ້າງຄວາມເສຍຫາຍ ໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ;
3. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
4. ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ ແລະ ຄ່າທຳນຽມອື່ນໆ ກ່ຽວກັບທີ່ດິນຢ່າງຄົບຖ້ວນ;
6. ປະຕິບັດຕາມລະບຽບການ ແລະ ເງື່ອນໄຂຂອງການເຊົ່າ ຫຼື ການສຳປະທານ ຢ່າງຄົບຖ້ວນ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003.***

**ມາດຕາ 19: ການຫັນປ່ຽນປະເພດທີ່ດິນ**

ວັກທີ 6: ທີ່ດິນ ທີ່ໄດ້ຮັບອະນຸຍາດໃຫ້ປ່ຽນແປງປະເພດໄປແລ້ວ ຕ້ອງນຳໃຊ້ໃຫ້ສອດຄ່ອງກັບເປົ້າໝາຍ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ. ຜູ້ທີ່ໄດ້ຮັບອະນຸຍາດໃຫ້ປ່ຽນແປງປະເພດທີ່ດິນ ຕ້ອງຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍ, ຄ່າຊົດເຊີຍພະຍາກອນ, ເສຍຄ່າທຳນຽມ ແລະ ຄ່າບໍລິການອື່ນໆ ຕາມລະບຽບການ.

***ເອກະສານອ້າງອີງ: ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008.***

**1 ມັງກອນ January** — ພສ ໒໕໕໙ / ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | | | | 1 | 2 |
| 3 | 4 | 5 | 6 | 7 | 8 | 9 |
| 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 |
| 24 | 25 | 26 | 27 | 28 | 29 | 30 |
| 31 | | | | | | |

1 ວັນປີໃໝ່ສາກົນ
20 ວັນສ້າງຕັ້ງກອງທັບ
21 – 22 – 23 ບຸນນະມັດສະການ ພຣະທາດສາມປາງ ແຂວງຈຳປາສັກ

**2 ກຸມພາ February** — ພສ ໒໕໕໙ / ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 | 13 |
| 14 | 15 | 16 | 17 | 18 | 19 | 20 |
| 21 | 22 | 23 | 24 | 25 | 26 | 27 |
| 28 | 29 | | | | | |

1 ວັນສ້າງຕັ້ງກຳມະບານລາວ
22 ວັນມາຄະບູຊາ
22 ບຸນນະມັດສະການ ພຣະທາດສີໂຄດຕະບອງ
22 ບຸນນະມັດສະການ ປາສາດຫີນວັດພູຈຳປາສັກ

ຮ່ວມຜະລິດ ແລະ ສະໜັບສະໜູນໂດຍ

# ບົດບາດຂອງແມ່ຍິງໃນສັງຄົມປັດຈຸບັນ
















**ມາດຕາ 2: ບົດບາດຂອງແມ່ຍິງ**

ວັກທີ 2: ແມ່ຍິງມີບົດບາດໃນທຸກຂົງເຂດວຽກງານທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການອະນຸລັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ສິ່ງທີ່ເປັນເອກະລັກຂອງແມ່ຍິງລາວ.

ວັກທີ 3: ແມ່ຍິງມີບົດບາດຮ່ວມກັບຄອບຄົວໃນການພັດທະນາ, ເບິ່ງແຍງ, ລ້ຽງດູ ແລະ ສຶກສາອົບຮົມສະມາຊິກຄອບຄົວໃຫ້ເປັນພົນລະເມືອງດີຂອງຊາດ.

**ມາດຕາ 17: ສິດສະເໝີພາບທາງດ້ານຄອບຄົວ**

ວັກທີ 1: ລັດ ແລະ ສັງຄົມສົ່ງເສີມ ແລະ ປົກປ້ອງຄວາມສະເໝີພາບຍິງ-ຊາຍພາຍໃນຄອບຄົວ.

ວັກທີ 6: ຜົວເມຍ ມີສິດເທົ່າທຽມກັນໃນການປຶກສາຫາລື, ຕົກລົງ ແລະ ແກ້ໄຂບັນຫາພາຍໃນຄອບຄົວຢ່າງເປັນເອກະພາບໃນການເລືອກບ່ອນຢູ່, ການປະກອບອາຊີບ, ການມີລູກ ແລະ ອື່ນໆ.

ວັກທີ 7: ລູກສາວ ແລະ ລູກຊາຍ ມີສິດເທົ່າທຽມກັນໃນການສືບທອດມູນມໍຣະດົກ ແລະ ໄດ້ຮັບການສຶກສາອົບຮົມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ເລກທີ 08/ສພຊ, ລົງວັນທີ 22 ຕຸລາ 2004.***

**ມາດຕາ 16: ບັນດາຂໍ້ເກືອດຫ້າມ ເພື່ອການຄຸ້ມຄອງ ປ່າສະຫງວນແຫ່ງຊາດ**

1. ຫ້າມດຳເນີນການຂຸດຄົ້ນໄມ້ທຸກຊະນິດ, ຂຸດຄົ້ນບໍ່ແຮ່, ສ້າງເຂື່ອນເກັບນ້ຳ, ກໍ່ສ້າງບັນດາກິດຈະການ ແລະ ຖະໜົນຫົນທາງ, ເກັບກູ້ເຄື່ອງປ່າຂອງດົງ, ລ່າສັດ, ເຄື່ອນຍ້າຍພັນພືດ, ພັນສັດ ແລະ ການດຳເນີນກິດຈະການປ່າໄມ້ອື່ນໆ ໃນເຂດຫວງຫ້າມເດັດຂາດ ແລະ ເຂດເຊື່ອມຕໍ່.
2. ຫ້າມ ຈັບຈອງ, ຊື້-ຂາຍເນື້ອທີ່ດິນ, ເຂົ້າມາຕັ້ງບ້ານເຮືອນ, ບຸກເບີກ ຂະຫຍາຍ ເນື້ອທີ່ນາໃໝ່, ການຖາງປ່າເຮັດໄຮ່ ແລະ ອື່ນໆ ໃນຂອບເຂດປ່າສະຫງວນ ແລະ ເຂດເຊື່ອມຕໍ່.

***ເອກະສານອ້າງອີງ: ລະບຽບການວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດ, ສັດປ່າ ແລະ ສັດນ້ຳ ເລກທີ 0360/ກປ.2003, ລົງວັນທີ 8 ສິງຫາ 2003.***

**3 ມີນາ March — ພສ ໒໕໕໘ — ຄສ 2016**

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 | 11 | 12 |
| 13 | 14 | 15 | 16 | 17 | 18 | 19 |
| 20 | 21 | 22 | 23 | 24 | 25 | 26 |
| 27 | 28 | 29 | 30 | 31 | | |

8 ວັນແມ່ຍິງສາກົນ
22 ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ

**4 ເມສາ April — ພສ ໒໕໕໘-໕໙ — ຄສ 2016**

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | | | | 1 | 2 |
| 3 | 4 | 5 | 6 | 7 | 8 | 9 |
| 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 |
| 24 | 25 | 26 | 27 | 28 | 29 | 30 |

13 ວັນສັງຂານລ່ວງ
14 ວັນເນົາ
15 ວັນເນົາ
16 ວັນສັງຂານຂຶ້ນ
14 ວັນສ້າງຕັ້ງອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ

ຮ່ວມຜະລິດ ແລະ ສະໜັບສະໜູນໂດຍ

# ການນຳໃຊ້ແຮງງານ



**ມາດຕາ 5 (ປັບປຸງ): ຫຼັກການກ່ຽວກັບວຽກງານແຮງງານ**

ວຽກງານແຮງງານ ໃຫ້ເຄື່ອນໄຫວບົນພື້ນຖານຫຼັກການ ດັ່ງນີ້:

1. ດຳເນີນບົນພື້ນຖານສັນຍາແຮງງານ ລະຫວ່າງ ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ, ຮັບປະກັນ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດໂດຍບໍ່ມີການຈຳແນກ;
2. ຮັບປະກັນເງື່ອນໄຂໃນການອອກແຮງງານທີ່ປອດໄພ, ຈ່າຍເງິນເດືອນ ຫຼື ຄ່າແຮງງານ ຢ່າງຍຸຕິທຳ ແລະ ປະຕິບັດຕາມລະບອບປະກັນສັງຄົມ ໃຫ້ຜູ້ອອກແຮງງານ;
3. ຮັບປະກັນການນຳໃຊ້ແຮງງານລາວ ໄປຄຽງຄູ່ກັບການຮັບເອົາແຮງງານຕ່າງປະເທດ ຢ່າງສົມສ່ວນ;
4. ຮັບປະກັນສິດໃນການເປັນສະມາຊິກ ແລະ ສ້າງຕັ້ງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ທີ່ຖືກຕ້ອງຕາມກົດໝາຍ ຢູ່ຫົວໜ່ວຍແຮງງານ;
5. ນຳໃຊ້ແຮງງານໄປຄຽງຄູ່ກັບການສ້າງ ແລະ ການພັດທະນາສີມືແຮງງານ ໂດຍສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ;
6. ຮັບປະກັນຫຼັກການດຸນດ່ຽງແຮງງານ ຕາມໂຄງປະກອບເສດຖະກິດ;
7. ບໍ່ອະນຸຍາດໃຫ້ນຳໃຊ້ແຮງງານດ້ວຍການບັງຄັບໃນທຸກຮູບແບບ;
8. ປະຕິບັດຫຼັກການສາມຝ່າຍ, ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍແຮງງານ ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013.***

**5 ພຶດສະພາ May** — **ພສ ໒໕໕໙ / ຄສ 2016**

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | 26 | 27 | 28 |
| 29 | 30 | 31 | | | | |

1 ວັນກຳມະກອນສາກົນ
20 ວັນວິສາຂະບູຊາ
21 ... ພສ 2559

**6 ມິຖຸນາ June** — **ພສ ໒໕໕໙ / ຄສ 2016**

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | | 1 | 2 | 3 | 4 |
| 5 | 6 | 7 | 8 | 9 | 10 | 11 |
| 12 | 13 | 14 | 15 | 16 | 17 | 18 |
| 19 | 20 | 21 | 22 | 23 | 24 | 25 |
| 26 | 27 | 28 | 29 | 30 | | |

1 ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ

ຮ່ວມຜະລິດ ແລະ ສະໜັບສະໜູນໂດຍ

# ການມີສ່ວນຮ່ວມຂອງແຕ່ລະພາກສ່ວນໃນການປົກປັກຮັກສາສິ່ງແວດລ້ອມ




ຂໍ້ 2.14. ການມີສ່ວນຮ່ວມຂອງຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ

- ສະເໜີເປັນລາຍລັກອັກສອນ ຕໍ່ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເພື່ອດຳເນີນການແກ້ໄຂບັນຫາ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ.

***ເອກະສານອ້າງອີງ: ຄຳແນະນຳ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013.***

**ມາດຕາ 40 (ໃໝ່): ພັນທະຂອງຜູ້ປະກອບການຕໍ່ສານເຄມີເປັນພິດ ແລະ ສິ່ງເສດເຫຼືອ**

ຜູ້ປະກອບການ ມີພັນທະກໍ່ສ້າງ, ຕິດຕັ້ງເຄື່ອງວັດແທກ, ເຄື່ອງຄວບຄຸມມົນລະພິດ ເພື່ອຕິດຕາມລວມທັງ ຕິດຕັ້ງລະບົບບຳບັດ, ຖິ້ມ, ຈູດ, ເຜົາ, ຝັງ ຫຼື ທຳລາຍ ຕາມວິທີການ, ເຕັກນິກ ແລະ ໃນເຂດທີ່ໄດ້ກຳນົດໄວ້ຕາມລະບຽບການ ແລະ ມີຄວາມຮັບຜິດຊອບໃນກໍລະນີສານເຄມີເປັນພິດ ຫຼື ສິ່ງເສດເຫຼືອ ທາກສິ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ ໂດຍສະເພາະຂອງແມ່ ແລະ ເດັກ, ພືດ, ສັດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012.***

**ມາດຕາ 70: ພັນທະໃນການປົກປັກຮັກສາສິ່ງແວດລ້ອມ**

ຜູ້ລົງທຶນ ມີພັນທະໃນການປົກປັກຮັກສາ, ພັດທະນາສິ່ງແວດລ້ອມ, ຮັບປະກັນບໍ່ໃຫ້ການດຳເນີນທຸລະກິດ ມີຜົນກະທົບຢ່າງຫຼວງຫຼາຍຕໍ່ສາທາລະນະຊົນ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ສຸຂະພາບຂອງຜູ້ອອກແຮງງານ. ໃນກໍລະນີທີ່ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບດັ່ງກ່າວ ຢ່າງທັນການຕາມລະບຽບກົດໝາຍ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009.***

**7 ກໍລະກົດ July** — ພສ ໒໕໕໙ / ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | | | | 1 | 2 |
| 3 | 4 | 5 | 6 | 7 | 8 | 9 |
| 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 |
| 24 | 25 | 26 | 27 | 28 | 29 | 30 |
| 31 | | | | | | |

13 ວັນຄ້າຍວັນເກີດຂອງ ທ່ານ ປະທານ ສຸພານຸວົງ
13 ວັນປ່ອຍປາ ແລະ ວັນອານຸລັກສັດນ້ຳ - ສັດປ່າ ແຫ່ງຊາດ
19 ວັນບຸນເຂົ້າພັນສາ
20 ວັນສ້າງຕັ້ງສະຫະພັນແມ່ຍິງລາວ

**8 ສິງຫາ August** — ພສ ໒໕໕໙ / ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 | 13 |
| 14 | 15 | 16 | 17 | 18 | 19 | 20 |
| 21 | 22 | 23 | 24 | 25 | 26 | 27 |
| 28 | 29 | 30 | 31 | | | |

13 ວັນສື່ມວນຊົນແຫ່ງຊາດ
15 ວັນລັດຖະທຳມະນູນແຫ່ງຊາດ
23 ວັນຍຶດອຳນາດ

ຮ່ວມຜະລິດ ແລະ ສະໜັບສະໜູນໂດຍ

LIWG, Village Focus International, care, CIDSE, JVC, PADETC, WWF, SODA, WorldRenew, CCL, ADRA Lao PDR, The Lutheran World Federation, Welthaus, MRLG, LAND, OXFAM

# ຄວາມສຳຄັນຂອງສັນຍາ




**ມາດຕາ 8 (ປັບປຸງ): ສັນຍາ**

ສັນຍາ ແມ່ນ ການຕົກລົງລະຫວ່າງຄູ່ສັນຍາ ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.

ສັນຍາ ອາດຈະເຮັດຂຶ້ນ ລະຫວ່າງ:

- ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ ດ້ວຍກັນ;
- ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ ກັບ ນິຕິບຸກຄົນອື່ນ ຫຼື ບຸກຄົນ;
- ນິຕິບຸກຄົນ ຫຼື ບຸກຄົນ ດ້ວຍກັນ;
- ນິຕິບຸກຄົນ ກັບ ບຸກຄົນ.

**ມາດຕາ 19 (ປັບປຸງ): ສັນຍາທີ່ເປັນໂມຄະບໍ່ເດັດຂາດ**

ສັນຍາທີ່ເປັນໂມຄະບໍ່ເດັດຂາດ ແມ່ນ ສັນຍາເປັນໂມຄະ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດຂອງບຸກຄົນເທົ່ານັ້ນ.

ສັນຍາທີ່ເປັນໂມຄະບໍ່ເດັດຂາດ ມີດັ່ງນີ້:

1. ສັນຍາທີ່ເຮັດຂຶ້ນດ້ວຍການຕົວະຍົວະຫຼອກລວງ ຫຼື ການບັງຄັບນາບຂູ່ ຫຼື ເຮັດຂຶ້ນໂດຍຝ່າຍໜຶ່ງໄດ້ຮັບຄວາມເສັຍປະໂຫຍດ;
2. ສັນຍາທີ່ເຮັດຂຶ້ນໂດຍຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ;
3. ສັນຍາທີ່ເຮັດຂຶ້ນໂດຍບຸກຄົນທີ່ຂາດສະຕິສຳນຶກ ຫຼື ຢູ່ໃນສະພາບມຶນເມົາອັນໜັກໜ່ວງ;
4. ສັນຍາທີ່ເຮັດຂຶ້ນໂດຍເຈດຕະນາບໍ່ດີຂອງຜູ້ຕາງໜ້າ;
5. ສັນຍາທີ່ເຮັດຂຶ້ນດ້ວຍຄວາມຈຳເປັນ ໃນສະພາບການອັນໜັກໜ່ວງເປັນພິເສດ;

ຖ້າວ່າສັນຍາທີ່ເປັນໂມຄະບໍ່ເດັດຂາດນັ້ນ ຫາກມີການເຫັນດີ ຫຼື ຮັບຮອງເອົາຈາກຝ່າຍທີ່ເສຍສິດ ແລະ ຜົນປະໂຫຍດແລ້ວ ກໍຈະຖືວ່າເປັນສັນຍາທີ່ໃຊ້ໄດ້.

**ມາດຕາ 24 (ປັບປຸງ): ການປະຕິບັດສັນຍາ**

ຄູ່ສັນຍາ ຕ້ອງປະຕິບັດສັນຍາດ້ວຍຄວາມຈິງໃຈ, ຄົບຖ້ວນ, ຕາມກຳນົດເວລາ ແລະ ໃນສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນສັນຍາ ຫຼື ກົດໝາຍ.

ຄູ່ສັນຍາ ບໍ່ມີສິດ ປະຕິເສດການປະຕິບັດສັນຍາ ຫຼື ປ່ຽນແປງເງື່ອນໄຂຂອງສັນຍາແຕ່ຝ່າຍດຽວ ເວັ້ນເສຍແຕ່ກໍລະນີທີ່ກົດໝາຍ ຫາກໄດ້ອະນຸຍາດໃຫ້.

ຄູ່ສັນຍາ ມີສິດບໍ່ຮັບເອົາການປະຕິບັດ ທີ່ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ແລະ ສອດຄ່ອງກັບສັນຍາ ຫຼື ກົດໝາຍ ເວັ້ນເສຍແຕ່ ສັນຍາ ຫຼື ກົດໝາຍ ຫາກໄດ້ກຳນົດໄວ້ຢ່າງອື່ນ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ເລກທີ 01/ສພຊ, ລົງວັນທີ 8 ທັນວາ 2008.***

**9** ກັນຍາ — September | ພສ ໒໕໕໙ — ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | | | 1 | 2 | 3 |
| 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 |
| 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | |

1 ບຸນຫໍ່ເຂົ້າປະດັບດິນ
1 ວັນບຸນຊ່ວງເຮືອ ແຂວງຫຼວງພະບາງ
16 ບຸນຫໍ່ເຂົ້າສະຫຼາກ

**10** ຕຸລາ — October | ພສ ໒໕໕໙ — ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | | | | | 1 |
| 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 |
| 16 | 17 | 18 | 19 | 20 | 21 | 22 |
| 23 | 24 | 25 | 26 | 27 | 28 | 29 |
| 30 | 31 | | | | | |

7 ວັນຄູແຫ່ງຊາດ
7 ວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ
12 ວັນປະກາດເອກະລາດ
16 ວັນບຸນອອກພັນສາ
17 ວັນບຸນຊ່ວງເຮືອນະຄອນຫຼວງວຽງຈັນ

ຮ່ວມຜະລິດ ແລະ ສະໜັບສະໜູນໂດຍ

# ຂັ້ນຕອນການເຂົ້າເຖິງຂະບວນຍຸຕິທຳ




**ມາດຕາ 80 ແລະ ມາດຕາ 81**
ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນມີ 2 ລັກສະນະຄື:
1. ການແກ້ໄຂບັນຫາ ທີ່ມີລັກສະນະບໍລິຫານ ກ່ຽວກັບທີ່ດິນ;
2. ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003.***

**ມາດຕາ 21 (ປັບປຸງ): ກຳນົດເວລາໃນການຍື່ນ ແລະ ການແກ້ໄຂຄຳສະເໜີ**

ຄຳສະເໜີ ໃຫ້ຍື່ນຕໍ່ອົງການບໍລິຫານ ພາຍໃນກຳນົດເວລາ ໜຶ່ງປີ ນັບແຕ່ວັນຖືກລະເມີດ ຫຼື ຮັບຊາບການລະເມີດເປັນຕົ້ນໄປ.

ຄຳສະເໜີ ຕ້ອງໄດ້ຮັບການພິຈາລະນາແກ້ໄຂພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

ໃນກໍລະນີຄຳສະເໜີ ບໍ່ໄດ້ຮັບການພິຈາລະນາແກ້ໄຂຕາມກຳນົດເວລານັ້ນ ຜູ້ສະເໜີ ມີສິດຍື່ນຄຳສະເໜີດັ່ງກ່າວຕໍ່ຂັ້ນເທິງຖັດນັ້ນເພື່ອພິຈາລະນາ. ຖ້າຫາກຍັງບໍ່ໄດ້ຮັບການພິຈາລະນາແກ້ໄຂຕາມກຳນົດເວລາອີກແລ້ວ ຜູ້ສະເໜີ ມີສິດຮ້ອງຟ້ອງຕໍ່ສານ ຫຼື ຮ້ອງຂໍຄວາມເປັນທຳຕໍ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຫຼື ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 30 (ປັບປຸງ): ກຳນົດເວລາໃນການຍື່ນ ແລະ ການແກ້ໄຂ ຄຳຮ້ອງຂໍຄວາມເປັນທຳ**
ວັກທີ 3: ຄຳຮ້ອງຂໍຄວາມເປັນທຳ ຕ້ອງໄດ້ຮັບການກວດກາ ແລະ ແກ້ໄຂ ພາຍໃນກຳນົດ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ເປັນຕົ້ນໄປ.

***ເອກະສານອ້າງອີງ: ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ເລກທີ 53/ສພຊ, ລົງວັນທີ 15 ທັນວາ 2014.***

- **ພາກສ່ວນຕ່າງໆທີ່ສາມາດໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ**
  - ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ;
  - ຂະແໜງຍຸຕິທຳ;
  - ສູນໃຫ້ຄຳປຶກສາຂອງສະຫະພັນແມ່ຍິງລາວ, ເລກໂທລະສັບ 1362 ຫຼື ພົວພັນທີ່ຫ້ອງການສະຫະພັນແມ່ຍິງຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ;
  - ສະພາແຫ່ງຊາດ;
  - ສະພາທະນາຍຄວາມ ແຫ່ງ ສປປ ລາວ, ເລກໂທລະສັບ: 021 353 953;
  - ສູນບໍລິການກົດໝາຍເພື່ອປະຊາຊົນ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ເລກໂທລະສັບ: 021 486 015.

**11 ພະຈິກ** ພສ ໒໕໕໙
**November** ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 | 11 | 12 |
| 13 | 14 | 15 | 16 | 17 | 18 | 19 |
| 20 | 21 | 22 | 23 | 24 | 25 | 26 |
| 27 | 28 | 29 | 30 | | | |

14 ບຸນນະມັດສະການ ພະທາດຫຼວງວຽງຈັນ

**12 ທັນວາ** ພສ ໒໕໕໙
**December** ຄສ 2016

| ອາທິດ S | ຈັນ M | ອັງຄານ T | ພຸດ W | ພະຫັດ T | ສຸກ F | ເສົາ S |
|---|---|---|---|---|---|---|
| | | | | 1 | 2 | 3 |
| 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 |
| 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 |

2 ວັນສະຖາປະນາ ສປປ ລາວ
13 ວັນຄ້າຍວັນເກີດ ຂອງທ່ານປະທານ ໄກສອນ ພົມວິຫານ

ຮ່ວມຜະລິດ ແລະ ສະໜັບສະໜູນໂດຍ